# ເປີດເຜີຍສູ່ມວນຊົນ

ປະເທດລາວຮູ້ສຶກດັກແນ່ວ່າ ອານາຄົດຈະມີກຳລັງຢູ່ໄດ້ ກໍ່ຕ້ອງມີການລວບລວມປະຊາຊົນ ທັງເປີດຂອງປະເທດເຂົ້າກັນ ດັ່ງໃນປະວັດສາດຂອງຕົນທີ່ເຄີຍມີມາແລ້ວຈຶ່ງຍັ້ງຢືນໃນຄວາມ ເປັນອັນໜຶ່ງອັນດຽວກັນແລະຄວາມເປັນເອກຣາຊຂອງຕົນຢ່າງສງ່າຜ່າເຜີຍ ປະຊາຊົນລາວ ຕ້ອງຍັ້ງຢືນດ້ວຍຄວາມຈົງຮັກພັກດີຕໍ່ຣະບອບປະຊາທິປະໄຕທີ່ມີພຣະມະຫາກະສັດແລະພຣະ ບໍຣົມຣາຊວົງຂອງພຣະບາດສົມເດັດພຣະເຈົ້າສຣີສວ່າງວົງ ພຣະເຈົ້າແຜ່ນດິນແຫ່ງປະເທດລາວ ບວງປະຊາຊົນລາວ ຂໍປະກາດວ່າຕົນປະສົງໃຫ້ມີການປົກຄອງຕາມຣະບອບປະຊາທິປະໄຕ ໃນທັມມະ ແລະ ໃຫ້ມີຣັຖທັມມູນສວ່ນປະຊາຊົນ ເພື່ອໄດ້ຮັບຮູ້ໃນສິດເສຣີພາບຂອງພົລເມືອງ ລາວ ເປັນຕົ້ນມີສິດເສຣີພາບຕໍ່ກົດໝາຍ ມີສິດໄດ້ຮັບຄວາມຄຸ້ມກັນ ໃນການຢູ່ກິນແລະມີສິດ ໃນການວາຈາມີສິດ ໃນການອອກສຽງມີສິດ ໃນການຈັດກຸ່ມກ້ອນຊຸມນຸມກັນມີສິດ ໃນການ ເຊື່ອຖືແລະອື່ນໆ ທີ່ຖືກຕ້ອງຕາມກົດໝາຍ [ ສ່ວນຣັຖບາລຄອມມູນິສລາວໄດ້ກັບມາຂາບ ໃຫ້ວເຊື້ອພຣະວົງຂອງລາວ ເຊັ່ນພຣະເຈົ້າຟ້າງຸ່ມທີ່ພຣະອົງເປັນເຊື້ອພຣະວົງມາແຕ່ກ່ອນແລະ ໄດ້ເຄີຍປົກຄອງ ອານາຈັກລາວມາແລ້ວແຕ່ໃນຊວ້ງຊາວສາມສິບປີຜ່ານມານີ້ ໄດ້ມີຄຳຖາມ ອັນໜຶ່ງທີ່ບັນດານັກການເມືອງແລະປະຊາຊົນລາວຖາມກັນມາຫລາຍທີ່ສຸດນັ້ນກໍ່ຄືວ່າເປັນ ຫຍັງຣັຖບາລລາວຄອມມູນິສ ຈຶ່ງພາກັນສ້າງແລະນຳພາປະຊາຊົນຂອງຕົນມາຂາບໃຫ້ວບູ ຊາພຣະເຈົ້າຟ້າງຸ່ມທັງ ໆ ທີ່ທິສດີແລະກຽດຊັງຣະບອບສັກດີນາແລະກະສັດອົງສຸດທ້າຍຂອງ ປະເທດລາວນັ້ນ ຄືພຣະເຈົ້າສຣີສວ່າງວັທນາແລະຣາຊວົງຂອງພຣະອົງ ໄດ້ຖືກຣັຖບາລລາວ ຄອມມູນິສ ສັ່ງປົດອອກຈາກບັນລັງແລະໄດ້ຈັບພຣະອົງໄປສູນສຳມະນາ ທີ່ເມືອງວຽງໄຊ ຖືກກັກຂັງແລະໄດ້ທໍຣະມານພຣະອົງຢູ່ທີ່ນັ້ນຈົນສິ້ນພຣະຊົນ

ອັນນີ້ພວກຄົນລາວເຮົາຢາກຂໍຖາມວ່າ ເປັນຫຍັງຢູ່ຊື່ໆ ພວກລາວຄອມມູນິສຈຶ່ງພາ ກັນຍົກເອົາພຣະເຈົ້າຟ້າງຸ່ມມາຂາບໃຫ້ວ-ຄ້າຕໍ່ໄປນີ້ພວກເຂົາອາດມີໂຄງການອີກ ເຂົາຈະ

ເອົາພຣະເຈົ້າໃຊເສດຖາທິຣາດ ຫຣືເຈົ້າອະນຸແລະເຈົ້າອື່ນ ໆ ອີກຂຶ້ນມາ ໃຫ້ປະຊາຊົນລາວ ຂາບໄຫ້ວ-ປະຊາຊົນລາວທັງຫລາຍຂໍຖາມ ພັກລັດວ່າ ໃນຄັ້ງວັນທີ-໑໗-໑-໐໖-ນັ້ນຢູ່ທີ່ເມືອງໜອງຄາຍປະເທສໄທຍໄດ້ມີຄົນໆ ໜຶ່ງໄດ້ສະຖາປານາຂຶ້ນມາວ່າເປັນເຈົ້າອະນຸວົງ ( ໃນຂໍ້ນີ້ແລ້ວພວກຄົນລາວທັງຫລາຍຂໍຖາມຊ້ຳອີກວ່າເປັນຫຍັງພວກລາວຄອມມູນິສ ຈຶ່ງພາກັນສົ່ງເງິນໃຫ້ຄົນໄທຍໄປຫາຂ້າຄົນລາວແລະກໍໄປລອບປະຫານຊີວິດຄົນທີ່ເຂົາສະຖາປານາຕົນຂຶ້ນມານັ້ນ ຫຣືວ່າຄົນໄທຍຄົນນັ້ນມັນເປັນຄອມມູນິສ ຄືກັນກັບພວກລາວບໍ ມັນຈຶ່ງເຮັດໄດ້ຢ່າງບໍ່ມີຄວາມຜິດເລີຍ -ອັນນີ້ແລ້ວມັນເປັນການດອກລວງ ຂອງພວກລາວຄອມມູນິສແລະວຽດນາມ ( ພວກເຮົາອົດສົງສານຊຸມຊົນຊາວລາວທີ່ຢູ່ໃນປະເທສແລະຢູ່ຕ່າງປະເທສໃນທົ່ວໂລກ ທີ່ບໍ່ຮູ້ວ່າພວກເຂົາເຈົ້າຕອ້ງຕາງໄປອີກຈັກເຊັ່ນຄົນຈຶ່ງຈຶ່ມີຜູ້ນຳທີ່ເຂົ້າໃຈການເມືອງຂອງຝ່າຍລາວຄອມມູນິສໄດ້ດີກວ່ານີ້ ຈະມີວິທີຕອບໂຕ້ແລະມີເຫດຜົນຫລາຍກວ່ານີ້

ຖ້າພວກລາວຄອມມູນິສ ຄິດຢາກຈະກັບອົກກັບໃຈດັ່ງທີ່ພວກທ່ານຄິດນັ້ນ ເປັນຫຍັງພວກລາວຄອມມູນິສຈຶ່ງບໍ່ເຊີນເອົາຣາຊວົງລາວ ທີ່ຢູ່ປະເທສຝຣັ່ງເສສເຂົ້າມີສ່ວນໃນການສເລີມສລອງແລະ ໃນການຂາບໄຫ້ວຣວ່ມກັບພວກເຂົາ ( ໃນການທຳຈັ່ງຊີ້ຈະທຳໃຫ້ງານນີ້ມີຄວາມໝາຍອັນສຳຄັນຍິ່ງຂຶ້ນກວ່າເກົ່າ ເພາະວ່າພຣະອົງເພິ່ນກໍ່ເປັນເຊື້ອສາຍອັນແທ້ຈິງຂອງຣາຊວົງອົງສຸດທ້າຍຂອງລາວແຕ່ວ່າໃນການກະທຳເຊັ່ນນີ້ ບໍ່ແມ່ນການກະທຳຂອງຄົນກັບໃຈແລະເວົ້າວ່າເປີດກວ້າງ ຫຣືເວົ້າວ່າມີປະຊາທິປະໄຕຢູ່ໃນເມືອງລາວແລ້ວ ອັນນີ້ແມ່ນເປັນການກະທຳຂອງຄົນທີ່ຢາກເອົາຕົວລອດທໍ່ນັ້ນຂ້າພະເຈົ້າກໍ່ເປັນສະມາຊິກທີ່ສຳຄັນຄົນໜຶ່ງຂອງສະພາແລະບໍ່ຢາກຖືກໄລ່ອອກຈາກການເປັນສະມາຊິກເພາະວ່າບົດ ຄວາມທີ່ຂ້າພະເຈົ້າກຳລັງຂຽນນີ້ ດວ້ຍມີເຫດຜົນ ຂ້າພະເຈົ້າຈຶ່ງຕັດສິນໃຈ ໃຊ້ນາມປາກກາມາແທນຊື່ ຈິງຂອງຂ້າພະເຈົ້າ ເຖິງຢ່າງໃດກໍ່ດີ ຂ້າພະເຈົ້າຂໍເນັ້ນວ່າຂ້າພະເຈົ້າມີຄວາມເຄົາຣົບແລະຈົງຮັກພັກດີຕໍ່ສະພາແຕ່ຄວາມຈົງຮັກພັກດີທີ່ສູງສຸດ ທີ່ຂ້າພະເຈົ້າມີຢູ່ນັ້ນແມ່ນມີ ຕໍ່ປວງປະຊາຊົນລາວ

ທັງພາຍໃນແລະນອກປະເທດ ເພາະວ່າຂ້າພະເຈົ້າຢາກໃຫ້ປວງປະຊາຊົນລາວໄດ້ຮູ້ຄວາມ
ຈິງຢ່າງແຈ້ງໃນຄວາມເປັນມາ ອັນນີ້ຄືເຫດຜົນທີ່ຂ້າພະເຈົ້າໄດ້ສົ່ງບົດຄວາມນີ້ມາໃຫ້ບັນ
ດາຜູ້ນຳລາວທັງຫລາຍແລະຄູອາຈານພ້ອມທັງຊັ້ນດອກເຕີ້ກໍ່ດີ ທີ່ຢູ່ໃນຫລາຍປະເທດແລະໃນ
ທົ່ວໂລກ ພ້ອມທັງປະຊາຊົນລາວທີ່ຢູ່ໃນປະເທດ ໃຫ້ໄດ້ຮັບຮູ້ໃນຄວາມຈິງບໍ່ວ່າໃນວິທີໃດກໍ່
ຕາມ ໃນການກະທຳຂອງທ່ານຈະມີຜົນເຮັດ ໃຫ້ຄົນລາວທັງຫລາຍໄດ້ມີໂອກາດຮັບຮູ້ໃນເລື້ອງ
ຄວາມຈິງນີ້ ອັນທີ່ຄົນລາວດອກລວງກັນວ່າໃນປະເທດລາວບໍ່ມີພຣະເຈົ້າມະຫາຊີວິດໃນອາ
ດີດນັ້ນອັນນີ້ມັນບໍ່ເປັນຄວາມຈິງ-ເພາະວ່າໃນອະດີດການພ່ານມາເພີ່ນເຄີຍມີມາແລ້ວເຊັ່ນ
ພຣະເຈົ້າຟ້າງຸ່ມ ພຣະເຈົ້າເສດຖາ ພຣະເຈົ້າສຸຣິຍະວົງສາຈົນຕໍ່ໆມາຮອດພຣະເຈົ້າສຣີສວ່າງວົງ
ພຣະເຈົ້າສຣີສວ່າງວັທນາ ຈົນມາເຖິງປີ-໑໙໗໕-ພວກລາວຄອມມູນິສໄດ້ນຳເອົາພຣະອົງໄປ
ປະຫານຊີວິດຫຣືຄົນທັງຫລາຍເວົ້າວ່າລາວຄອມມູນິສເອົາໄປຂ້າຖິ້ມຢູ່ເຂດເມືອງວຽງໄຊ
ອັນນີ້ກະຣຸນາໃຫ້ພາກັນລະວັງຢ່າໃຫ້ສັດຕູຮູ້ຈັກເພາະຢ້ານນຳຄວາມລຳບາກໄປສູ່ຍາດໆ
ຂອງທ່ານສ່ວນສັດຕູທີ່ພັກຄອມມູນິສຢ້ານທີ່ສຸດນັ້ນ ກໍ່ຄືສັດຕູທີ່ອາໃສຢູ່ໃນບ້ານຫລັງດຽວ
ກັນ ກັບພວກເຂົາເອງນັ້ນແລ້ວ ເພາະວ່າຄົນໆນັ້ນສາມາດທຳໄດ້ຫລາຍຢ່າງ ທີ່ພວກຢູ່ຕ່າງ
ປະເທດເຂົາເຈົ້າບໍ່ສາມາດເຮັດໄດ້ ຂ້າພະເຈົ້າຍັງໄດ້ອ່ານແລະໄດ້ງິນຄຳຕອບຈາກຫລາຍທ່ານ
ກໍ່ມີເຫດຜົນດີແຕ່ເຫັນວ່າສ່ວນຫລາຍ ໃນບັນດາທ່ານທັງຫລາຍ ຍັງຂາດຄວາມເຂົ້າໃຈອັນ
ຈະແຈ້ງກ່ຽວກັບເລື້ອງນີ້ ຂ້າພະເຈົ້າຈຶ່ງຕັດສິນໃຈມາອະທິບາຍ ໃຫ້ທຸກໆທ່ານໄດ້ຟັງໄດ້ເຫັນ
ກ່ຽວກັບເລື້ອງຄວາມຈິງທີ່ຢູ່ເບື້ອງຫລັງຂອງເລື້ອງປຣາດນີ້ ກ່ອນທີ່ຈະເຂົ້າໃຈໃນເລື້ອງນີ້ຢ່າງ
ລະອຽດແລະໃຫ້ເຫັນແຈ້ງ ຂ້າພະເຈົ້າກໍ່ຢາກຈະໃຫ້ທ່ານຜູ້ອ່ານ ໄດ້ຈົດຈຳເອົານິຍາມອັນນຶ່ງ
ໄວ້ກ່ອນອັນນັ້ນກໍ່ຄືການເມືອງນັ້ນເອງ ໃນການເມືອງນັ້ນກໍ່ຄືການ ໃຫ້ຮູ້ຈັກສວຽ ໃຊ້ຜູ້ຄົນແລະ
ສະພາບແວດລ້ອມໃນຄະນະຣັຖບາລລາວຄອມມູນິສກໍ່ຄຸຍໂມ້ວ່າຮູ້ຈັກເຫຣັ້ນການເມືອງແລະ
ໄດ້ຄ່ອງແຄ້ວຫລາຍ ຄັ້ງຫລາຍເລົ່າທີ່ພວກເຂົານຳເອົາຣາຊວົງລາວມາໃຊ້ເພື່ອຜົນປະໂຍດທາງການ

ເມືອງຂອງພວກລາວຄອມມຸນິສ ຫລັງຈາກໄດ້ຍຶດອຳນາດໄດ້ ໃນປີ-໑໙໗໕-ນັ້ນ ໃນຄະນະແກ່ນນຳພັກຄອມມຸນິສລາວ ກໍໄດ້ປະກາດແຕ່ງຕັ້ງ ໃຫ້ສະເດັດເຈົ້າສຸພານຸວົງ ຂຶ້ນເປັນປະທານປະເທສ-ເພື່ອຕອກລວງຕາຊາວໂລກແລະປະຊາຊົນລາວທັງຊາດແລ້ວເຂົາກໍ່ນຳເອົາໄກ່ສອນພົມວິຫານ ຂຶ້ນເປັນພຽງນາຍົກຣັດຖມົນຕຣີອັນນີ້ແລ້ວພວກເຮົາຢາກຈະຖາມວ່າເປັນຫຍັງຈຶ່ງເປັນສະເດັດເຈົ້າສຸພານຸວົງ ໃນຕອນນັ້ນ ( ອັນນີ້ຈະຕອບວ່າ )ນີ້ແລ້ວພວກເຂົາ ໃຊ້ກົນອຸບາຍລວງຕາຄົນລາວ ຖ້າວ່າພວກເຂົາເອົາໄກສອນມາເປັນປະທານປະເທສໂລດນັ້ນບໍ່ໄດ້ເພາະວ່າໄກສອນບໍ່ແມ່ນເຊື້ອພຣະວົງ ເພາະສະນັ້ນເຂົາຈຶ່ງນຳເອົາໄກສອນ ໄວ້ຫລັງສາກ ໃນຄຳຕອບກໍ່ຄື ປະເທສລາວເປັນປະເທສສັກດີນາມາແຕ່ໃດ ໆ ບໍ່ວ່າເພີ່ນຈະດີຫຣືຊົ່ວປານ ໃດກໍ່ຕາມດວ້ຍເຫດນັ້ນພວກເຂົາຈຶ່ງແຕ່ງຕັ້ງເອົາສະເດັດເຈົ້າສຸພານຸວົງຂຶ້ນເປັນປະທານປະເທສ ເພື່ອຈະເປັນຮຸ່ນ ໃຊ້ ໃຫ້ປະຊາຊົນເຫັນວ່າ ໃນຣັດຖບາລລາວຄອມມຸນິສນັ້ນ ເຂົາຍັງມີເຊື້ອກະສັດຢູ່ນຳ ໃນເວລາທີ່ປະຊາຊົນສວ່ນ ໃຫ່ຍ ກຳລັງເຊີດຊູປະທານປະເທສຄົນ ໃໝ່ ທີ່ມີເຊື້ອພຣະວົງຕິດມາດວ້ຍນັ້ນ ຢູ່ທາງລຸ່ມພວກຄອມມຸນິສ ແຕ່ພວກລາວ ຄອມມຸນິສກໍ່ພາກັນທຳການປາບປາມພວກປະຕິການແລະກໍ່ສ້າງຖານກຳລັງຂອງຕົນ ໃນທຸກທ້ອງຖິ່ນ ພໍ ງານນັ້ນສຳເຣັດແລະເຂົາມີຖານກຳລັງພຽງພໍແລ້ວເຂົາກໍ່ມາພາກັນປົດ ສະເດັດເຈົ້າສຸພານຸວົງໂດຽທາງອອ້ມແລະໂດຽການປຽ່ນຕຳແໜ່ງຂອງປະທານປະເທສ ໃຫ້ເປັນພຽງຫຸ່ນທໍ່ນັ້ນ ແລ້ວພວກມັນມາຍົກເອົາອຳນາດ ທັງເປີດມາ ໃຫ້ຣັດຖມົນຕຣີ ໄກສອນພົມວິຫານ ໃນພຽງຊາວປີ ຫລັງຈາກປົດປຽ່ນ ໃນຊາວສາມສິບປີຜ່ານມານີ້ ເຖິງປະຈຸບັນແມ່ນແຕ່ໜໍ່ຫຣືແໜງຂອງເຊື້ອພຣະວົງລາວກໍ່ບໍ່ຍັງຢູ່ ໃນຄະນະຣັດຖບາລລາວຄອມມຸນິສເລີຍ -ເຊັ່ນທ່ານຄຳ ໃຊ ລູກຊາຍຂອງສະເດັດເຈົ້າສຸພານຸວົງ ຄົນທີ່ມີຄວາມຮູ້ຄວາມສາມາດແລະສະຫລາດຫລັກແຫລມ ກໍໄດ້ຖືກເນຣະເທສອອກມາຢູ່ຕ່າງປະເທສ ທ່ານຄຳ ໃຊກໍ່ໄດ້ອອກໄປຢູ່ປະເທສນິວຊີແລນ ໃນປະຈຸບັນນີ້ ປະເທສລາວກໍ່ຍັງບໍ່ມີເຊື້ອພຣະວົງຂອງລາວທີ່ໄດ້ເຂົ້າຮ່ວມ ໃນການປະຕິວັດສາມສິບປີມານຳພວກພັກຄອມມຸນິສເຂົານັ້ນໄດ້ຖືກຖອນ

ຣາກຖອນໂຄນຈົນເບີດໄປແລ້ວ -ອັນນີ້ແລ້ວສຸພາສິດເພິ່ນໄດ້ເວົ້າວ່າ-ເຮັດນາແລ້ວກໍ່ພາກັນຂ້າຄວາຍເຖິກກິນທັນທີ ເຊັ່ນຕົວຢ່າງສະເດັດເຈົ້າສຸພານຸວົງນັ້ນ ກໍ່ໄດ້ຖືກພວກລາວຄອມມຸນິສທີ່ຢູ່ພາຍໃຕ້ການນຳພາຂອງພັກຄອມມຸນິສຫວຽດນາມເໜືອພວກມັນເອົາສະເດັດເຈົ້າ- ໃຊ້ໄຖນາໃຫ້ພວກເຂົາພໍແລ້ວ -ພໍແລ້ວນາແລ້ວພວກເຂົາກໍ່ຂ້າຖິ້ມຫຣືໄລ່ໜີອອກຈາກປະເທສຄືດັ່ງທີ່ເຫັນສະພາບ ຂອງທ່ານຄຳໃຊ ລູກຊາຍຂອງສະເດັດເຈົ້າສຸພານຸວົງນັ້ນ ສຸດທ້າຍມາພຣະອົງກໍໄດ້ກາຍມາເປັນຜູ້ອົພຍົບ ຜ່າສານທາງການຂອງຣັຖບາລນິວຊີແລນຄືກັບກັບຄົນລາວຈຳນວນປະມານ-໑-ລ້ານຄົນຫຣືເວົ້າອີກຢ່າງນຶ່ງກໍ່ແມ່ນປະມານນຶ່ງສ່ວນສາມຂອງປະຊາຊົນລາວ ໃນປີ-໑໙໗໕-ທີ່ກາຍເປັນຜູ້ອົພຍົບນັ້ນເພາະການເມືອງອັນສົງບຂາດ ຂອງພັກຄອມມຸນິສລາວນັ້ນເອງ ມາບັດນີ້ພວກເຮົາຄົນລາວທັງຫລາຍ ໃຫ້ພາກັນມາເບິ່ງວ່າ ເປັນຫຍັງພວກພັກຄອມມຸນິສລາວຢູ່ໆ ກໍ່ພາກັນປັ້ນຮູບຂອງພຣະເຈົ້າຟ້າງຸ່ມຂຶ້ນມາແລະກໍ່ພາກັນນຳເອົາຊ້າງເຜືອກງາບີນແລະເອົາຄູບາອາຈານແລະນຳເອົາໝໍທຳບໝໍພອນມາອັນເຊີນພຣະເຈົ້າຟ້າງຸ່ມ ຜູ້ເປັນບັນພຣະບຸຣຸດທີ່ຊາວລາວ ທຸກທົ່ວໜ້ານ້ອຍໃຫຍ່ທັງຫລາຍ ຢູ່ໃນປະເທສແລະນອກປະເທສຕ່າງກໍໃຫ້ຄວາມເຄົາຣົບແລະນັບຖືຂຶ້ນມາຊາບ ໃຫ້ວ ສ່ວນຣັຖບາລລາວຄອມມຸນິສນັ້ນໄດ້ກ່າວໄວ້ວ່າ ພວກສັກດີນາແລະນາຍທຶນນັ້ນ ມັນເປັນສັດຕູນ້ຳເບີໜຶ່ງ ຂອງການປະຕິວັດຂອງເຂົາຢູ່ແລ້ວພວກທີ່ມັນພາກັນປັ້ນຮູບນີ້ລະ ມັນເປັນພວກດຽວກັນກັບພວກທີ່ດອກລວງໃຊ້ ສະເດັດເຈົ້າສຸວັນນະພູມາແລະສະເດັດເຈົ້າສຸພານຸວົງ ໃຫ້ຂຶ້ນເມືອເມືອງຫລວງພຣະບາງອັນນີ້ແລ້ວ ໃນການດອກລວງຂອງຄອມມຸນິສ ທີ່ເຂົາເວົ້າວ່າພັກຣາຊວົງໃນຄາວກ່ອນນັ້ນ ໃນທ້າຍເດືອນ ມີນາ ປີ-໑໙໗໕-ພວກມັນໄປບີບບັງຄັບອີກອົງ ຄືພຣະເຈົ້າສຣີສວ່າງວັທນາ ໃຫ້ສະຣະບັນລັງໂດຍ ໃຫ້ທຳຕາມຄຳສັ່ງ ຂອງຄນະແກ່ນນຳພັກຄອມມຸນິສລາວ ຜູ້ນັ້ນຄືນາຍໄກສອນຫລັງຈາກໄດ້ຍື່ນຈົດໝາຍສະຣະບັນລັງໃຫ້ພຣະອົງແລ້ວທັງສອງສະເດັດກໍ່ນີກັບມາວຽງຈັນ ແລ້ວພວກລາວຄອມມຸນິສກໍ່ເອີ້ນປະຊຸມສະພາປະຊາຊົນດ່ວນ

ອີກຄັ້ງແລະ ໃຫ້ໃຊ້ຕາມຫລັກຄຳສັ່ງຂອງພັກຄອມມູນິສລາວວຽດນາມທີ່ຕົກລົງກັບທາງລັບ
ຂອງເຈົ້ານັ້ນ ພຣະອົງກໍໄດ້ຮັບຈົດໝາຍສະຣະບັບລັງດັງກ່າວຂອງພຣະອົງ ແລ້ວ ພວກລາວ
ຄອມມູນິສວຽດນາມ ກໍໄດ້ປະກາດສ້າງຕັ້ງປະເທສລາວຂື້ນມາໃໝ່ ໃຊ້ຊື່ວ່າເປັນປະເທສ
ສາທາຣະນະລັດປະຊາທິປະໄຕປະຊາຊົນລາວ ໃນວັນທີ-໒-ທັນວາ ປີ-໑໙໗໕-ອັນທີ່ໄດ້ກ່າວ
ມາແລ້ວນັ້ນກໍແມ່ນແກ່ນນຳກຸ່ມຄອມມູນິສ ໃນປະຈຸບັນນີ້ລະພໍພວກມັນຍຶດອຳນາດໄດ້ແລ້ວ
ພວກມັນກໍດຳເນີນແຜນການຂັ້ນຕໍ່ໄປໂດຍການຈັບສົ່ງພຣະເຈົ້າສຣີສວ່າງວັທນາແລະຄອບຄົວ
ຂອງພຣະອົງອັນນີ້ຂ້າພະເຈົ້າຂໍໂທດນຳພໍ່ແມ່ພີ່ນ້ອງທັງຫລາຍ ( ທີ່ຂ້າພະເຈົ້າບໍ່ຮູ້ຈັກລາຊາຊົນ)
ພໍພວກມັນສົ່ງພຣະອົງໄປເມືອງວຽງໄຊແລ້ວມັນກໍຍັງໄດ້ບັງຄັບ ໃຫ້ພຣະອົງທຳງານໜັກພ້ອມ
ກັບນັ້ນພວກມັນຍັງໄດ້ທຳລາຍທາງກາຍຂອງພຣະອົງ ຈົນພຣະອົງລຳບາກຢ່າງທໍຣະມານຈົນ
ບອມໃຈຕາຍຢ່າງທໍຣະມານ ສ່ວນອົງມຸງກຸດຣາຊະກຸມມານເຈົ້າຟ້າຊາຍວົງສວ່າງນັ້ນ ກໍໄດ້ຖືກ
ປະຫານຊີວິດດ້ວຍນຳມືຂອງວຽດນາມແລະລາວຄອມມູນິສ ຢູ່ທີ່ຊາຍແດນລາວກັບວຽດ
ນາມ ສ່ວນເຊື້ອພຣະວົງທີ່ຢູ່ປະເທສຝຣັ່ງເສສນັ້ນ ພວກເພີ່ນບໍ່ແມ່ນລອດຕາຍຍ້ອນຄວາມ
ຮັກ ຂອງພວກລາວຄອມມູນິສເລີພີ່ນ້ອງລາວເອີຍ-ແຕ່ເພີ່ນລອດຕາຍຍ້ອນເປັນບຸນຄຸນຂອງ
ພຣະອິນພຣະພົມຕ່າງຫາກ ທີ່ເພີ່ນສົງສານປະຊາຊົນລາວ ຫຣືວ່າປະເທສລາວຂອງພວກເຮົາ
ເພີ່ນຈຶ່ງບັນດົນບັນດານ ໃຫ້ເຊື້ອພຣະວົງລາວເຮົາຫວິດພົ້ນຈາກຄວາມຕາຍໄດ້ແລະໄດ້ໄປ
ຢູ່ປະເທສນອກ ອັນນີ້ແລ້ວແມ່ນເຫດການທີ່ເກີດຂື້ນ ໃນປະເທດລາວ ໃນປີ-໑໙໗໕-ນັ້ນມາ
ອັນນີ້ພວກເຮົາມາພາກັນຖາມກັນວ່າ ພວກລາວຄອມມູນິສນີ້ເຫັນວ່າພຣະເຈົ້າສຣີສວ່າງ
ວັທນາຄວນຕາຍຢ່າງທໍຣະມານນັ້ນພວກເຈົ້າຄວນທີ່ຈະຄິດເຫັນວ່າພຣະເຈົ້າຟ້າງຸ້ມນັ້ນກໍຄວນ
ທີ່ຈະຖືກທໍຣະມານຫລາຍກວ່າ ເພາະວ່າພຣະເຈົ້າຟ້າງຸ້ມນັ້ນເພີ່ນເປັນຣະຫລັນພໍ່ຂອງພໍ່
ພໍ່ຂອງພໍ່ສັກດີນາລາວແຕ່ເປັນຫຍັງພວກລາວຄອມມູນິສຈຶ່ງຢູ່ ໆກໍຍົກເອົາເພີ່ນຂຶ້ນມາຂານ
ໃຫ້ວ່າຫຣືວ່າໝໍຜີປີສາດແລະຜີອາລັກຫລັກເມືອງຫຣືວ່າພະຍາຄຸດພະຍານາຄແລະຜີຟ້າຜີ

ແຖນມາວຽນວົນ ໃຫ້ຈິດໃຈຂອງຜູ້ນຳລາວຄອມມູນິສວຽດນາມ ໃຫ້ກາຍໄປເປັນຄົນຜີບ້າຫລືເສັຽອົງຄະສາສິນໄປ ເພາະວ່າພວກນີ້ທຳໃນສິ່ງແປກໆອັນນີ້ແລ້ວແມ່ນພວກເຂົາໄປໃຊ້ແຜນເກົ່າ ທີ່ພວກລາວຄອມມູນິສເຄີຍໃຊ້ມາແລ້ວນັ້ນ ກໍ່ຄືໃນການເອົາກະສັດຂຶ້ນມາເປັນເຄື່ອງມືຮັບໃຊ້ອີກຄັ້ງ ເພື່ອໃຫ້ປະຊາຊົນຫລົງພື້ນປວັດສາດຂອງລາວເຮົາແລະກໍ່ເພື່ອຢູ່ລອດຂອງພວກລາວຄອມມູນິສ ເພາະວ່າຈະນຳເອົາເຊື້ອພຣະວົງລາວທີ່ຢູ່ປະເທສຝຣັ່ງມາໃຊ້ກໍ່ບໍ່ໄດ້ເພາະຍ້ອນວ່າພວກຕົນເອງໄດ້ຂ້າພໍ່ຕູ້ແມ່ຕູ້ຂອງເພິ່ນແລ້ວ ກໍ່ຄືພຣະເຈົ້າສຣີສວ່າງວັທນານັ້ນເອງຢ່າງໂຫດຮ້າຍທາລຸນແລະມັນຍັງທໍຣະມານພຣະອົງ ຖ້າພວກລາວຄອມມູນິສຈະນຳເອົາເຊື້ອພຣະວົງທີ່ອອກປ່າໄປເຮັດການປະຕິວັດນຳກັນຕັ້ງແຕ່ສາມສິບປີຄືນຫລັງນັ້ນກໍ່ບໍ່ໄດ້ເພາະວ່າພໍ່ແລ້ວນາແລ້ວ ພວກເຂົາກໍ່ພາກັນຂ້າເພິ່ນຖິ້ມແລະໄດ້ເນຣະເທສລູກໆຫລານໆຜູ້ຍັງເຫລືອມັນໄລ່ອອກນອກປະເທສໄປເບີດແລ້ວເພາະສະນັ້ນກະສັດທີ່ພວກພັກລາວຄອມມູນິສ ພໍຈະນຳເອົາມາໃຊ້ໄດ້ເປັນປະໂຍດໄດ້ນັ້ນກໍ່ມີແຕ່ຜູ້ທີ່ເພິ່ນໄດ້ລ່ວງລັບໄປແລ້ວທໍນັ້ນ ເພາະວ່າເພິ່ນບໍ່ສາມາດກັບຄືນມາຕອບໂຕ້ຖຽງຫລືຕໍ່ຕ້ານຣະບອບຂອງຣັຖບາລລາວຄອມມູນິສໄດ້ຖ້າຈະປັ້ນຫລືແຕ່ງຕັ້ງເພິ່ນໄປທາງໃດກໍໄດ້-ທີ່ນີ້ອັນໃດຄືເຫດການຫລືສະພາບການ ທີ່ເຮັດໃຫ້ຄະນະແກ່ນນຳຂອງພັກຄອມມູນິສລາວຕັດສິນໃຈກ້າສ່ຽງເຮັດນີ້ ເຫດຜົນທີ່ຈິງນັ້ນ ກໍ່ຄືມີດັ່ງຕໍ່ລົງໄປນີ້

ສ່ວນປະເທສເພື່ອນບ້ານຂອງລາວນັ້ນ ລ້ວນແລ້ວແຕ່ມີຜູ້ນຳຂອງເຂົາເຈົ້າທີ່ປະຊາຊົນເຄົາຣົບນັບຖືແລະບູຊາໃນບັນດາຂອງປະເທສນັ້ນໆກໍ່ໄດ້ອາໃສຫລືບາຣະມີຂອງຜູ້ນຳນັ້ນໆເຮັດໃຫ້ພວກເພິ່ນຢູ່ລອດສ່ວນປະເທສວຽດນາມ ມີທ່ານໂຮ່ຈີມິນທີ່ຊາວວຽດນາມລວມທັງປະຊາຊົນແລະບັນດາກຸ່ມຜູ້ນຳນັບຖືບູຊາຫໂຮງຕາມພາສາຄົນວຽດນາມທີ່ພວກເຂົາເຈົ້າຄືຢູ່ໃນແຕ່ຣະໝູ່ບ້ານຈົນກາຍເປັນຫໍຜີຫລັກບ້ານຫລັກເມືອງເພາະປະຊາຊົນຂາບໄຫວ້ເຫດນັ້ນພຽງແຕ່ຣັຖບາລວຽດນາມກ່າວວ່ານີ້ຄືສິ່ງທີ່ສູງໂຮຍາກທຳປະຊາຊົນທົ່ວປະເທສ ກໍ່ຕົກລົງຕາມນັ້ນ ໂດຍບໍ່ມີການຄັດຄ້ານ ສ່ວນຈີນກໍ່ມີທ່ານເມົາເຈີຕຸງ ທີ່ຊາວຈີນຂາບໄຫວ້ແລະ

ບູຊາ ສ່ວນປະເທສຂະເມນກໍ່ມີກະສັດບໍຣະດົມສີຫານຸ ທີ່ປະຊາຊົນຊາບ ໃຫ້ວແລະບູຊາ ສ່ວນປະເທສໄທຍນັ້ນ ກໍ່ມີໃນຫລວງຄືພຣະເຈົ້າຢູ່ຫົວ ທີ່ປະຊາຊົນທັງຫລາຍພ້ອມພວກ ຜູ້ນຳນ້ອຍໃຫຍ່ທັງຫລາຍຂອງເພິ່ນ ພາກັນຊາບ ໃຫ້ວສ່ວນຣະຫລັບປະເທສລາວນັ້ນ ມີແຕ່ຄະນະແກ່ນນຳຂອງພັກຄອມມຸນິສລາວ ໄດ້ພະຍາຍາມທຳກາຣສ້າງປັ້ນຮູບນາຍໄກ ສອນພົມວິຫານຂຶ້ນ ໃຫ້ຄົນລາວບູຊາພວກເຂົາໄດ້ໃຊ້ເງິນຂອງປະຊາຊົນແລະກຳລັງຄວາມ ສາມາດເພື່ອກາຣໂຄສະນາ ກາຣບຸກຣະໂດມແລະຊົນຂວຽຕ່າງ ໆ ໃຫ້ຄົນລາວເຄົາຣົບແລະ ນັບຖືນາຍໄກສອນພົມວິຫານ ແຕ່ບໍ່ໄດ້ຜົນສຳເຣັດພວກເຂົາຈຶ່ງໄດ້ພາກັນປັ້ນຮູບໄກສອນ ໄວ້ ທຸກໝູ່ບ້ານແລະໄດ້ຊຽນປວັດຊີວິດທີ່ບໍ່ເປັນຄວາມຈິງ ຂຶ້ນໂຄສະນາແລະເຮັດທຸກຢ່າງ ໄວ້ ເພື່ອໃຫ້ຄົນລາວນັບຖືຜູ້ນຳຂອງເຂົາຈົນເຖິງຊາວກວ່າປີຜ່ານພົ້ນໄປແລ້ວແຕ່ຄົນລາວ ກໍ່ຍັງບໍ່ຮັກແລະເຄົາຣົບໄກສອນຄືພວກເຂົາຕ້ອງກາຣນັ້ນ ຂັ້ນຕໍ່ໄປອາຈເປັນຮູບຄຳໄຕກໍ່ເປັນ ໄດ້ (ອັນນີ້ແລະຄືກາຣຫລົ້ມເຫລວອັນໃຫຍ່ຫລວງຂອງລາວພັກຄອມມຸນິສ ຖ້າບໍ່ມີ ກາຣແກ້ໄຂຢ່າງວ່ອງໄວອາຈເປັນຜົນໃຫ້ຣັຖບາລລົ້ມຣະລາຍໄດ້ ພວກລາວຄອມມຸນິສ ນັ້ນ ຄິດວ່າ ອ່ານປະຊາຊົນລາວອອກໄດ້-ວ່າຄົນລາວເປັນຄົນອ່ອນນ້ອມແລະອ່ອນແອແລະ ອາໄສເພິ່ງແຕ່ຜູ້ນຳອັນນັ້ນມັນເປັນເລື້ອງໃນປວັດໄປແລ້ວສ່ວນໃນບັນດາກຸ່ມຜູ້ນຳລາວຄອມ ມຸນິສ ທີ່ມີຢູ່ໃນປັຈຈຸບັນນີ້ ບໍ່ມີໃຜ ທີ່ປະຊາຊົນລາວເຄົາຣົບແລະນັບຖືເໝືອນກັບຜູ້ນຳຂອງ ປະເທສໃກ້ຄຽງ ຫລືປະເທສເພື່ອນບ້ານ ພວກເຂົາບໍ່ສາມາດເຮັດໃຫ້ປະຊາຊົນລາວຮັກແລະ ເຄົາຣົບໄກສອນ ເພາະວ່ານາຍໄກສອນ ບໍ່ເໝືອນກັບພັກຄອມມຸນິສວຽດນາມ ທີ່ພວກເຂົາ ສາມາດເຮັດໃຫ້ຄົນວຽດນາມຊາບ ໃຫ້ວທາດໂຮຈິມິນ ເພາະລາວຂາດຄວາມເປັນຜູ້ນຳທີ່ ເປັນທັມ ສ່ວນຄົນລາວເຮົາເຖິງຈະຊື່ ແຕ່ບໍ່ແມ່ນເປັນຄົນໂງ່ໄຣ່ປັນຍາ ເໝືອນກັບຄົນ ໆນຶ່ງ ຢູ່ໃນປະເທສລາວປະຈຸບັນນີ້ເວົ້າວ່າພວກບໍ່ຫວັງດີ ອັນນີ້ແລ້ວພວກເຂົາລ້ວນແຕ່ຂາດເປັນຜູ້ ນຳແຕ່ທີ່ຄົງຢູ່ໄດ້ນັ້ນກໍ່ເພາະກາຣສຍູ້ດຂອງວຽດນາມແລະປະກອບກາຣ ຂາດຄວາມສາມະ

ຄື ຂາດຜູ້ນຳທີ່ເຊື່ອຖືໄດ້ ໃນຫວ່າງກູ້ຊາຕແລະການທີ່ລາວບໍ່ແມ່ນຍຸທສາດທີ່ສຳຄັນ ທີ່ທາງປະເທສມະຫາອຳນາດ ຈະ ໃຫ້ຄວາມສົນ ໃຈດ້ວຍເຫດນີ້ທາງຄະນະຣັຖບາລຄອມມຸນິສລາວເຂົາຈຶ່ງຊອກຫາທາງອອກ ໃຫ້ພວກຕົນ ໂດຍການຍືດຕໍ່ເວລາຄອບຄອງອຳນາດຂອງພວກເຂົາສ່ວນແກ່ນການເມືອງເກົ່າ ທີ່ພັກຄອມມຸນິສລາວ ໃຊ້ໄດ້ທີ່ສຸດນັ້ນ ກໍ່ຄືການ ໃຊ້ຣາຊວົງເປັນເຄື່ອງຕົບຕາແລະດອກລວງປະຊາຊົນລາວ ເພື່ອຄ້ຳຊູອຳນາດແລະຄວາມຢູ່ລອດຂອງພວກລາວຄອມມຸນິສ ຄືດັ່ງທີ່ພວກເຂົາໄດ້ດອກ ສະເດັດເຈົ້າສຸພານຸວົງ ໃນຕອນຍຶດອຳນາສ ໃໝ່ໆນັ້ນພວກເຂົາເຫັນຄວາມຫລົ້ມເຫລວຂອງພວກຕົນ ເອງແລ້ວ ໃນເລື້ອງນາຍໄກ່ສອນນັ້ນເຂົາຄິດເຫັນວ່າ ປະເທສລາວເປັນປະເທສສັກດີນາ ມາແຕ່ດຶກດຳບັນແລ້ວ ປະຊາຊົນລາວກໍ່ຍັງຄົງເຄົາຣົບນັບຖືກະສັດຢູ່ ພວກເຂົາເຫັນໄດ້ຊັດແຈ້ງແລ້ວວ່າ ໃນຕອນເຈົ້າຟ້າເທບຂອງໄທຍ ຈົ່ງສະເດັດໄປຢ້ຽມຢາມປະເທສລາວ ໃນຕອນນັ້ນ ກໍ່ມີຄົນລາວອອກມາຕ້ອນຮັບຢ່າງໜາແໜ້ນແລະແສນດີໃຈຂອງປະຊາຊົນລາວເປັນຈຳນວນຫລວງຫລາຍ ໄດ້ພາກັນຫັນໄປຂາບ ໃຫ້ວເຊື້ອພຣະເຈົ້າຊີວິດໄທຍປະຊາຊົນລາວກໍ່ມີແສນດີອົກດີໃຈເພາະໄດ້ຂາບໃຫ້ວເຊື້ອພຣະວົງໄທຍເພາະຍອ້ນວ່າຄົນລາວໄດ້ຫ່າງໄກເຊື້ອພຣະວົງຂອງຕົນເອງມາດົນນານແລ້ວ ເສັ້ຽດາຍປະເທສລາວເຮົາທີ່ເຄີຍມີກະສັດຢູ່ ແຕ່ມີຄົນບາງຄົນໄດ້ໄປທັບມ້າງເສັ້ຽໄປຢ່າງບໍ່ມີຮ່ອງຮອຍເລີຍ ເພາະສະນັ້ນ ໃນຕໍ່ມາພວກລາວຄອມມຸນິສ ຈຶ່ງໄດ້ຕັດສິນ ໃຈບຸກຣະໂດມການບູຊາກະສັດໂດຍພາຍໃຕ້ ການນຳຂອງ ພັກຣັຖ ລາວຄອມມຸນິສແລະເຂົາເຊື່ອວ່າອັນນີ້ຈະເປັນຜົນ ໃຫ້ພວກເຂົາຄົງຢູ່ລອດ ໄດ້ອີກດົນນານຕໍ່ໄປເພາະສະນັ້ນພວກເຂົາເຫັນເປັນເອກສັນກັນວ່າ( ຖ້າຫາ້ມບໍ່ ໃຫ້ປະຊາຊົນຫັນໄປຫາກະສັດບໍ່ໄດ້ພວກເຂົາຕ້ອງຫັນໄປຂາບໄຫ້ວກະສັດຢ່າງແນ່ນອນເພາະສະນັ້ນພວກແກ່ນນຳຂອງພັກຄອມມຸນິສລາວ ເຫັນເຖິງຄວາມສ່ຽງຂອງພວກເຂົາເອງ ໃນການທຳຢ່າງນີ້ ຕຣອດເວລາທີ່ຜ່ານມາພວກເຂົາໄດ້ສັ່ງສອນປະຊາຊົນລາວເຮົາວ່າ ສ່ວນຣະບອບສັກດີນາບາງທີນັ້ນແມ່ນເປັນສັດ

ຕຣູຂອງປະຊາຊົນແລະເປັນສັດຕຣູຂອງການປະຕິວັດຂອງພວກເຂົາ ພວກເຂົາກໍ່ຈົນຕາແຈບໍ່ມີທາງເລືອກ ຍ້ອນເຫດຜົນທີ່ກ່າວມານັ້ນເອງທີ່ພວກເຂົາຈະນຳເອົາກະສັດອົງໃດມາເປັນຫຸ່ນເຊີດອີກເພາະພວກເຂົາໄດ້ຂ້າກະສັດອົງສຸດທ້າຍຂອງລາວເຮົາແລ້ວ ຄືພຣະເຈົ້າສຣີສວ່າງວັທນາແລະເຊື້ອພຣະວົງຂອງເພິ່ນໄປເບີດແລ້ວ ໂດຍມີທັງການທໍຣະມານໃຫ້ຕາຍຢູ່ໃນສູນສັມນາ ທີ່ເມືອງວຽງໄຊ ແຕ່ພາສາລາວເວົ້າວ່າພຣະອົງຖືກຄຸກສ່ວນທີ່ເຫລືອນັ້ນໄດ້ຫຣົບໜີໄປຢູ່ປະເທສຝຣັ່ງເສສ ປະຊາຊົນສ່ວນຫລາຍກໍ່ຍັງຄອຍທີ່ຈະຍຶດອຳນາດຈາກພວກເຂົາຢູ່ສ່ວນພວກລາວຄອມມູນິສ ໃນປະຈຸບັນນີ້ ຕ້ອງການຈະຍົກເອົາເຊື້ອສາຍ ຂອງສູສຸພານຸວົງກໍ່ບໍ່ໄດ້ ເພາະຍ້ອນວ່າຄວາມຊົ່ວຮ້າຍຂອງພວກຕົນເອງ ທີ່ກະທຳໄວ້ຫລາຍຢ່າງຫລັງຈາກດອກລວງໃຊ້ສະເດັດເຈົ້າສຸພານຸວົງ ໃຫ້ເປັນຫຸ່ນຂອງພວກເຂົາເຊີດເຫລັ້ນມາເປັນເວລາສາມສິບກວ່າປີຕຣອດເຮັດການປະຕິວັດແລະຍຶດອຳນາດໄດ້ສົມໃຈແລ້ວພວກລາວຄອມມູນິສກໍ່ໄດ້ ຫາທາງປັດເຊັ່ຍພຣະອົງອອກເຊັ່ນເຖົ້າເກົ່າເພິ່ນກ່າວໄວ້ວ່າບາແລ້ວຂ້າຄວາຍເຖິກເສິກແລ້ວຂ້າຄົນຫານແລະພວກມັນຍັງພາກັນທໍຣະມານເຮັດໃຫ້ພຣະອົງຕອມໃຈຕາຍຢ່າງໜ້າສັງເວດ ເພາະວ່າພຣະອົງເອງເຫັນວ່າຕົນເອງບໍ່ສາມາດຊ່ວຍເຫລືອປະຊາຊົນຂອງຕົນເອງໄດ້ ດັ່ງທີ່ເຄີຍຄິດໄວ້ໃນເວລາເຮັດການປະຕິວັດຢູ່ນັ້ນ ແມ່ນແຕ່ລູກຊາຍຂອງພຣະອົງເອງ ກໍ່ຄືທ່ານຄຳໃຊອະດີດຣັຖມົນຕຣີກະຊວງການເງິນ ກໍ່ຈຳຕ້ອງໄດ້ໂຕນໜີ ເກືອບໄດ້ຖືກຂ້າເໝືອນເຊື້ອພຣະວົງອື່ນ ໆ ໃນປີ-໑໙໗໕-ເປັນຕົ້ນມານັ້ນ ກ່ອນໂອກາດຫລົບໜີມາຢູ່ຕ່າງປະເທສເພາະສະນັ້ນ ໃນບັນດາກະສັດທີ່ພວກເຂົາຍັງໃຊ້ໄດ້ຢູ່ນັ້ນກໍ່ມີແຕ່ກະສັດທີ່ເພິ່ນໄດ້ດວງລັບໄປແລ້ວນັ້ນ ເພາະເພິ່ນບໍ່ສາມາດຟື້ນຂຶ້ນມາຄັດຄ້ານພວກລາວຄອມມູນິສໄດ້ ແລະເພິ່ນບໍ່ໄດ້ມາດ່າພວກເຂົາ ເພາະວ່າພວກລາວຄອມມູນິສມີຄວາມຊົ່ວ ທີ່ພວກເຂົາໄດ້ກະທຳຢູ່ກັບປະເທສຊາຕແລະຢູ່ກັບປະຊາຊົນລາວຕຣອດວັນ

( ພີ່ນ້ອງລາວເອີຍ ໃຫ້ພວກເຮົາມາພາກັນຄິດເບິ່ງວ່າ-ຄົນຕາຍຄ້ານຄົນເປັນບໍ່ໄດ້ດອກຍັງມີເຫດຜົນອີກຢ່າງສຳຄັນທີ່ກະຕຸ້ນໃຫ້ພວກເຮົາທຳຢ່າງນັ້ນກໍ່ຄືແນວໂຮມຂອງບັນດາປະເທສຕ່າງ ໆ

ในโลกที่พะยายามอวดอ้างและโคสะนาปวัดสาด ในการเป็นมาของบันดาปะเทสนั้น ๆ ในปวัดสาดยิ่งเก่าแก่และด็นนานมานั้นถ็นยิ่งนิยมนับถือว่าปะเทสนั้นมีคุนส็มบัด ของการเป็นปะเทส และเป็นที่เค็ารบนับถือในว็งการสาก็น ส่วนปะเทดขะแมนต้องอวดอ้างปวัดสาดของเข็าเจ้าเลี่มต้น ในปี-๑๑๑๓-หา-๑๑๔๕-ส่วนปะเทสไทย อวดอ้างปวัดของเข็าเจ้ามีมาแต่สะมัยเมืองสุโขไทย ในปี-๑๙๓๗- ส่วนวยดนามอวดอ้าง ในสะมัยอานาจักต่าง ในปี-๓๙๗-ส่วนปะเทสลาวอยู่พากใต้การนำของพักคอมมูนิสวยดนามเหนือ ได้บันทึกสอนนักรยนและบอกซาวโลกว่าปวัดสาดของปะเทสลาวนับตั้งแต่การเลี่มต้นของการปะติวัด ในปี-๑๗๔๕-ตรอด-๔๐-กว่าปีที่ผ่านมานั้น รัถบาลพักคอมมูนิสลาว ให้ซาวโลกได้รับรู้ปวัดสาดของลาวแต่การกำเนิดของการปะติวัดของเข็าในปี-๑๗๔๕-เป็นต้นมาที่นั้น พวกเข็าบ่ยอมกล่าวเถิงปวัดสาดก่อนหน้านั้นเลียเพาะย้านว่าการกะทำเช่นนั้นจะเป็นการฟื้นฟูในความเค็ารบและนับถือระบอบสักดินา เพาะเหดนั้น ในสายตาของโลกเข็าจึ่งแนมเห็น ปะเทสลาวเป็นปะเทสเกิดใหม่ มีปวัดสาดพยงแต่-๕๕-ปีที่นั้น ในนั้นมันก็เป็นย้อนความผิดของพวกลาวคอมมูนิสเอง เพาะว่าย้อนพวกเข็า ปอ้นปวัดสาด ในอะดีดมาเป็นปวัดสาดของการปะติวัดของลาวคอมมูนิส- อันนี้แล้วพวกลาวคอมมูนิส จึ่งบ่สามาดบอกปะซาซ็นลาวและซาวโลกได้ซาบ ในเลื่องปวัดสาดอันยาวนานของปะเทสลาวที่นับกับไปเถิง ในสะมัยพระเจ้าฟ้างุ่ม ที่ได้ทอ้นโรมแผ่นดินลาวเหดผ็นใหย่ๆ ที่สำคันอันที่พวกเข็าย้านและบ่ก้าบอกปะซาซ็นลาวและซาวโลกนั้น เพาะกัวกับปวัดสาดอันยาวนานของปะเทสลาวก็เพาะว่าพวกเข็าย้านปะซาซ็น จะกับคืนไปเค็ารบนับถือระบ็บสักดินา เพาะกะสัดเป็นส่วนสำคัน ของปะซาซ็นลาวอยู่สเมีมาแต่สะพาบการได้หับปุ้น และซาวโลก ก็บ่พากันเห็นความสำคัน ของปะเทส เพาะเข็าเจ้าถือว่า พวกเฮามี

ປະວັດສາດທີ່ສັ້ນ (ຄືກັນກັບເດັກນ້ອຍທີ່ເກີດໃໝ່) ໃນຄວາມຄິດຢ່າງນີ້ຂອງຊາວໂລກ ແລະ ມີຜົນກະທົບໂດຍກົງຕໍ່ກະເປົາຂອງບັນດາຜູ້ນຳລາວຄອມມູນິສ ເພາະມັນມີຜົນເຮັດໃຫ້ການ ຊ່ວຍເຫລືອ ຈາກຕ່າງປະເທດນ້ອຍລົງແລະຜູ້ນຳລາວຄອມມູນິສ ກໍ່ມີທາງສໍ້ກົງນ້ອຍລົງ ເລື້ອງທັງເປີດ ທີ່ໄດ້ກ່າວມານີ້ໄດ້ບີບບັງຄັບ ໃຫ້ພວກເຈົ້າຕັດສິນໃຈຫັນປ່ຽນ ແລ້ວຊອກ ຫາທາງອອກອັນງາມໃຫ້ພວກຕົນ ເພື່ອພວກເຈົ້າຈະໄດ້ມີໂອກາດເສບສຸກໄປນານໆສຳລັບ ຣັຖບາລລາວຄອມມູນິສ ແລ້ວແມ່ນແກ່ນການເມືອງ ແກ່ນການເມືອງນີ້ເປັນແກ່ນທີ່ສຳຄັນ ທີ່ສຸດ ນັບຕັ້ງແຕ່ພວກເຈົ້າຢຶດອຳນາດມາກໍ່ເປັນແກ່ນທີ່ພວກເຈົ້າຫວັງວ່າຈະໄດ້ຜົນຕອບແທນ ໃນຫລາຍທາງ ຈາກການກະທຳຂອງພວກເຈົ້າສວນສະພາບການຕົວຈິງ ພາງ ໃນແກ່ນການນຳ ຂອງພັກນັ້ນ ແມ່ນຫຍຸ້ງຮ້າງກວ່າຄືກ(ຫລື) ເສັ້ນເຈົ້າບຸ້ນພວກເຈົ້າເຫັນວ່າທາງຫວຽດນາມໃນ ຊ່ວງຫລັງ ແລະຈີນນັ້ນພາກັນດັ່ງໄຫລເຂົ້າມາຢູ່ລາວຢ່າງຫລວງຫລາຍແຕ່ພວກເຈົ້າກໍ່ບໍ່ສາ ມາດ ຢຸດຢັ້ງຫລືຫ້າມປາມໄດ້ ເພາະພວກລາວຄອມມູນິສ ອາໃສການຊ່ວຍເຫລືອຈາກ ປະເທດຫວຽດນາມຄອມມູນິສຫລາຍເພາະວ່າພວກລາວຄອມມູນິສໄປຕິດໜີ້ ບຸນຄຸນ ຂອງແກວຫລາຍ ຍ້ອນການຊ່ວຍເຫລືອຂອງພວກເຈົ້າໃນສມັຍສົງຄາມ ແຕ່ໃນຄວາມເປັນ ລາວແລະຄວາມຢ້ານໃນການຢຶດອຳນາດຂອງຫວຽດນາມ ເພາະພວກຫວຽດນາມໄດ້ປະກາດ ປະເທດລາວເຮົາໃຫ້ໄປເປັນແຂວງໜຶ່ງຂອງຫວຽດນາມເພີ້ມຂຶ້ນມາທຸກ ໆ ວັນ ໃນປະຈຸບັນນີ້ ປະກອບກັບການບອກເຕືອນ ຊາວລາວທີ່ຢູ່ນອກປະເທດ ກ່ຽວກັບເລື້ອງນີ້ເພື່ອເຕືອນສະຕິ ສະນັ້ນ ພວກເຈົ້າຈຶ່ງຕັດສິນໃຈສູງ ແລ້ວພວກເຈົ້າຈຶ່ງນຳເອົາກະສັດອົງພຣະເຈົ້າຟ້າງຸ່ມ ຂຶ້ນມາຂາຍ ໃຫ້ວເພື່ອເປັນການບອກຫວຽດນາມແລະຊາວໂລກໄດ້ຮັບຮູ້ວ່າປະເທດລາວນີ້ ເຄີຍມີເອກຣາຊມາແຕ່ດຶກດຳບັນແລະບໍ່ແມ່ນເປັນຫົວເມືອງຂຶ້ນຫລືສ່ວນໜຶ່ງ ຂອງຫວຽດນາມ ເໜືອ ໃນປະຈຸບັນ ນີ້ ສ່ວນພວກແກ່ນນຳສ່ວນໜຶ່ງຂອງພັກຄອມມູນິສນັ້ນກຳລັງເລີ້ມຕື່ນຕົວ ກ່ຽວກັບເຫດການຕ່າງ ໆ ທີ່ເຫັນມາແລະວາດກວ່າ ເພາະພວກເຈົ້າຢ້ານຫວຽດນາມກືນກິນລາວ

ໂດຍທາງອ້ອມຂອງວຽດນາມ ແຕ່ພວກແກ່ນນຳທັງຫລາຍກໍຍັງປ້ານ ແລະບໍ່ກ້າຄັດຄ້ານຢ່າງອອກໜ້າອອກຕາເພາະມັນມີຫລາຍຄົນຢູ່ໃນວົງການທີ່ເປັນລູກນ້ອງຂອງວຽດນາມເຊັ່ນປະທານປະເທສແລະຣັຖບາລພ້ອມຄົນອື່ນໆອີກ ເພາະສະນັ້ນພວກເຂົາຈຶ່ງອາສັຍ ພຣະເຈົ້າຟ້າງຸ່ມເປັນຣົ່ມໂພຣົ່ມໃຊ້ໂດຍທາງອ້ອມຫວັງວ່າໃນການກະທຳເຊັ່ນນີ້ເຂົາວ່າຂື້ນຊື່ເສືອແລ້ວລົງບໍ່ໄດ້ ພວກນີ້ຈຶ່ງພາກັນຕັດສິນໃຈເດີນໜ້າແຕ່ວ່າຫາທາງເຕືອນວຽດນາມໂດຍທາງອ້ອມ ( ອັນນີ້ຄືເຫດຜົນທັງຫລາຍ )ແຕ່ພວກເຮົາຈະຖາມວ່າ ເປັນຫຍັງຢູ່ໆຣັຖບາລລາວຄອມມຸນິສ ຈຶ່ງພາກັນຄັດເລືອກເອົາພຣະເຈົ້າຟ້າງຸ່ມມາອ້າງແຕ່ຕໍ່ໜ້າໄປນັ້ນ ພວກນີ້ອາດຈະນຳເອົາເຈົ້າອານຸ ເຈົ້າໃຊເສດຖາຂຶ້ນມາດອກລວງໃຫ້ປະຊາຊົນລາວອີກຄັ້ງ ແຕ່ມັນອາດຈະເປັນໄປບໍ່ໄດ້ເພາະວ່າໃນວັນທີ-໑໙-໑-໐໘-ນັ້ນຢູ່ທີ່ເມືອງໜອງຄາຍຍັງໄດ້ມີສາຍລັບ ຂອງຄະນະພັກຣັຖຂ້າມນ້ຳໂຂງມາຮອບຍິງ ຄົນຜູ້ທີ່ເຂົາເຈົ້າສະຖາປານາຂຶ້ນມາຊື່ໆຈົນໄດ້ເສັຽຊີວິດໄປທັງສອງຜົວເມັຽ ອັນນີ້ຫຣະມັນສະແດງເຖິງຄວາມໂຫດຮ້າຍແລະຄວາມຊົ່ວຊ້າຂອງຄົນກຸ່ມນີ້ ( ອັນນີ້ພໍແຕ່ວ່າເຂົາເຈົ້າສະຖາປານາ ຂອງຕົນເອງຂຶ້ນມາຊື່ໆພວກເຮົາຈະຖາມກັນວ່າຖ້າມີເຊື້ອກະສັດຂຶ້ນມາເປັນຈິງເດ ພວກລາວຄອມມຸນິສນີ້ ສິບໍ່ນຳຂ້າແລະນຳທຳລາຍຢ່າງດຽວກັນ ເຊັ່ນຄືຄົນທີ່ເຂົາເຈົ້າສະຖາປານາຂຶ້ນມານີ້ບໍ່ ເພາະພວກນີ້ຫາຂ້າກະທັ້ງປະຊາຊົນທົ່ວໆໄປທີ່ຢູ່ຕ່າງປະເທສ ຫຣືຢູ່ໃນປະເທສກໍ່ມີ ພວກນີ້ຂ້າກະທັ້ງຣາຊວົງລາວ( ແຕ່ເປັນຫຍັງພວກລາວຄອມມຸນິສນີ້ ຈຶ່ງມາພາກັນນຳບຸກເອົາກະທັ້ງດວງວິນຍານ ບັນພຣະບຸຣຸດຂອງລາວ ທີ່ເພີ່ນໄດ້ດັ່ງລັບໄປແລ້ວນັ້ນຂຶ້ນມາອັນນີ້ແລ້ວເພື່ອເປັນການດອກລວງຕາປະຊາຊົນທີ່ພວກເຂົາເຈົ້າເວົ້າຫຍັງບໍ່ໄດ້ນັ້ນ ເພາະພັກຣັຖປາບປາມກະທັ້ງຄວາມເວົ້າຂອງປະຊາຊົນປາບກະທັ້ງສິດທິຂອງມະນຸດພວກເຂົານຳເອົາດວງວິນຍານຂອງພຣະອົງຂຶ້ນມາເພື່ອເປັນເສົາຄຸ້ມຄອງຂອງພວກລາວຄອມມຸນິສ ຫຣືເພື່ອຄວາມຢູ່ລອດຂອງພວກເຂົາ ອັນນີ້ ທາງພຣະພຸທເຈົ້າເພີ່ນຍັງໄດ້ສອນໄວ້ວ່າ ບາບກັມນັ້ນມັນຈະນຳເຂົາເຖິງຕົວຄົນທີ່ທຳລາຍໄດ້ແລະຕອ້ງ

ມີເຫດເຫັນທັນຕາ ກັມຍ່ອມສນອງ ໃນຄວາມຜິດຂອງພວກນີ້ກໍ່ຄື ພວກເຈົ້າຍົກເອົາພຣະເຈົ້າຟ້າງຸ່ມຂຶ້ນມາເປັນເສົາແກ່ນຕາປະຊາຊົນແລະຈະມີເສົາຕໍ່ ໆ ໄປຢູ່ເລີ ພວກນີ້ຈະນຳເອົາເຊັ່ນເຈົ້າອານຸແລະເຈົ້າ ໃຊເສດຖາຫຣີເຈົ້າອື່ນໆອີກ ໃນຕໍ່ໜ້າ ສຸດທ້າຍນັ້ນພວກເຈົ້າຈະນຳເອົາເຈົ້າຕ່າງ ໆ ທີ່ເພິ່ນໄດ້ດ່ວງລັບໄປແລ້ວນັ້ນ ມາເປັນຮົ້ວອ້ອມ ຖານອຳນາດຂອງລາວຄອມມຸນິນ ໃນທີ່ສຸດແລ້ວພວກພັກຄອມມຸນິສລາວ ທີ່ເປັນພັກມະຫາໂຫດນັ້ນ ມັນກໍ່ພາກັນຍ່າງຕາມລ້າງທັງດວງວິນຍານຂອງຄົນເປັນຄົນຕາຍ ກໍ່ຈະກາຍເປັນຄືກັບແກ່ນກາງ ໄດ້ຮັບອຳນາດແລະຄວາມເຫັນພ້ອມ ຈາກບັນພຣະບຸຣຸດລາວ ໃຫ້ພວກເຈົ້າຈະໄດ້ຢູ່ດອກລອງ ປະຊາຊົນລາວອີກຕໍ່ໄປແລະສືບຕໍ່ສ້າງ ໃຊ້ອຳນາດຜະເດັດການອັນນີ້ແລ້ວຄືຣະບອບສັກດີນາຄອມມຸນິສແກວເໜືອ ( ໃນບັນຫາໃຫຍ່ທີ່ກ່າວມານີ້ຈະຕອບວ່າ ) ຄົນຕາຍຖຽງຄົນເປັນບໍ່ໄດ້ເພາະວ່າພຣະເຈົ້າຟ້າງຸ່ມນັ້ນເພິ່ນສິ້ນພຣະຊົນໄປແລ້ວແລະເພິ່ນຈະຂຶ້ນມາຖຽງພວກລາວຄອມມຸນິສໄດ້ຈັ່ງໃດ ຖ້າຖຽງໄດ້ກໍ່ຕ້ອງມີແຕ່ປະຊາຊົນລາວທໍ່ນັ້ນ ທີ່ຍັງມີຊີວິດຢູ່ແລະຈະຖຽງພວກເຈົ້າໄດ້ເວົ້າອີກຢ່າງນຶ່ງກໍ່ຄືພັກລາວຄອມມຸນິສ ຂາດ ໃນຄວາມເຄົາຣົບແລະ ໃນການນັບຖືຂອງປວງປະຊາກອນລາວ ທັງໃນປະເທສແລະຢູ່ຕ່າງປະເທສ ພ້ອມກັນນັ້ນກໍ່ຍັງຂາດຄວາມເຄົາຣົບແລະ ໃນການນັບຖືຈາກປະເທສເພື່ອນບ້ານແລະສາກົນພວກເຈົ້າກໍ່ຮູ້ດີວ່າ ໃນສະພາບເຊັ່ນນີ້ຖ້າບໍ່ມີການແກ້ໄຂຈະມີຜົນນຳໄປສູ່ການລົ້ມຣະລາຍຂອງຣັຖບາລລາວຄອມມຸນິສສ່ວນຣັຖບາລລາວຄອມມຸນິສໃນປະຈຸບັນນີ້ ຍັງຂາດຄວາມເຄົາຣົບຈາກປະຊາຊົນລາວທັງໃນປະເທສແລະຕ່າງປະເທສຈະຢູ່ໄດ້ຈັ່ງໃດ ອັນນີ້ແລ້ວຄືເຫດຜົນທີ່ແທ້ຈິງ ທີ່ລາວຄອມມຸນິສຮົບກວນດວງວິນຍານຂອງພຣະເຈົ້າຟ້າງຸ່ມແລະພວກນີ້ໃນຂັ້ນຕໍ່ໄປຈະມີແຜນການທີ່ຈະກຸກກວນດວງວິນຍານ ຂອງບັນພຣະບຸຣຸດລາວອີກຫລາຍ ໆດວງວິນຍານຂອງແຕ່ລະພຣະອົງຂຶ້ນມາຄຸ້ມຄອງ ໃຫ້ພວກຄອມມຸນິສສາບສູນໄປຈາກໂລກ ອັນນີ້ແລ້ວເຈົ້າເຮັດໄດ້ກໍ່ຍ້ອນວ່າຄົນຕາຍຖຽງຄົນເປັນບໍ່ໄດ້ ສ່ວນປະຊາຊົນລາວຢູ່ໃນປະເທສແລະຢູ່ນອກປະເທສ ພວກເຈົ້າເຈົ້າຕ່າງກໍ່ພາກັນເຄົາຣົບນັບຖືບັນດາກະສັດທີ່ໄດ້ເຄົ່າມານັ້ນເພາະສະນັ້ນພວກລາວຄອມມຸນິສ

ຈຶ່ງໃຊ້ປາຣະມີຂອງພວກເພິ່ນ ເພື່ອຜົນປະໂຍດແລະຄວາມຢູ່ລອດຂອງລາວຄອມມຸນິສຖ້າ ພວກເຮົາ ມາພາກັນສັງເກດເບິ່ງຢ່າງໃກ້ຊິດແລະຣະອຽດທີ່ຖ້ວນແລ້ວມັນຈະເປັນຄວາມຈິງເຊົ່າ ມາອັນນີ້ແມ່ນເປັນການກະທຳໃນລັກຊະນະຂອງຣັຖບາລຄອມມຸນິສລາວທີ່ກຳລັງຈະເປີດອຳນາດ ເພາະພວກເຂົາປິ້ນຈາກໜ້າມືມາເປັນຫລັງມືໄປແລ້ວ ເພາະສະນັ້ນໃນປະຈຸບັນນີ້ ເຂົາຊອກຫາ ທາງອອກໃຫ້ຕົນເອງພວກນີ້ກໍ່ຄືກັບປາທີ່ຖືກແກວຈັບຖິ້ມຂື້ນບົກນັ້ນ ໄດ້ພາກັນດີ້ນຊຸກວັບໆຢູ່ ເພາະຢ້ານຕາຍທັງເປັນ ແລ້ວພາກັນຊອກຫາທາງອອກໃຫ້ຕົນເອງອັນນີ້ພວກເຮົາຈະຖາມກັນວ່າ ພວກມັນຈະດີ້ນໄປອີກນານປານໃດ ເພາະ ມັນຂື້ນກັບປະຊາຊົນລາວທີ່ຮັກປະຊາທິປະໄຕຢ່າງ ແທ້ຈິງພ້ອມກັນນັ້ນພວກເຮົາຈະຖາມປະຊາຊົນລາວທີ່ເຂົາເຈົ້າຖືສັນຊາດຊາວຕ່າງດ້າວແລະປະ ຊາຊົນທີ່ຢູ່ພາຍ ໃນປະເທສວ່າພວກເຮົາຈະເຮັດແນວໃດໄດ້ ໃນຂັ້ນຕໍ່ໄປຂ້າພະເຈົ້າຫວັງວ່າປະ ຊາຊົນລາວຈະບໍ່ນິ້ງດູດາຍແຕ່ຕ້ອງຊອກຫາທາງຊ່ວຍກັນປົດແອກເຫລັກທີ່ໜັກໜ້າຂອງວຽດນາມ ເອົາມາສຸບຄໍ ປະຊາຊົນລາວແລ້ວໃຫ້ພາກັນມາປຸ່ນພາຣະໜ້າທີ່ ທີ່ພວກແກວຄອມມຸນິສ ກົດຂີ່ຖໍປະຊາຊົນລາວນັ້ນໃຫ້ອອກໄປໃຫ້ໄດ້ ເພື່ອຄວາມສຸກແລະຄວາມເປັນລາວ ຂອງລູກລາວ ຫລານລາວໃນລຸ້ນຕໍ່ໆໄປແລະເພື່ອຊີວິດໃນການເສັຽສະຣະ ຂອງອົງສະເດັດເຈົ້າຟ້າງຸ່ມເຈົ້າອະນຸ ວົງ ເຈົ້າເສດຖາທິຣາຊ ເຈົ້າເພຊຣາຊ ຫຣື ບັນພຣະບຸຣຸດອື່ນ ໆ ຂອງລາວ ອັນບໍ່ໄດ້ເປັນການສູນ ເສັຽທີ່ເປົ່າດາຍ ແກ່ຄົນ ລາວລຸ້ນຫລັງ ໆ ຈະໄດ້ຣະນຶກເຖິງພວກລາວພັດຖິ່ນຫືວ່າລາວອິສຣະ ແລະກ້າເວົ້າວ່າເລືອດລາວນີ້ມັນມີສີແດງເຂັ້ມ ເຕັມໄປດ້ວຍຄວາມເປັນລາວພ້ອມອາບດົ້ນໄປ ດ້ວຍຄວາມກ້າຫານຄວາມເປັນວິຣະບຸຣຸດລາວ ປະຊາຊົນລາວທຸກຊົນຊາດທີ່ຮັກຊາດແພງເຊື້ອ ປາຖນາຢາກໃຫ້ປະເທສລາວເປັນປະເທສເອກຣາຊ ມີສັນຕິພາບແລະມີການປົກຄອງຕາມຣະ ບອບປະຊາທິປະໄຕຢ່າງແທ້ຈິງປະຊາຊົນລາວນີ້ຕໍ່ສູ້ເພື່ອສິດທິຂອງມະນຸສຊົນແລະຄວາມເປັນ ທັມຕໍ່ສູ້ກັບຄວາມອະທັມນາໆປະການບໍ່ວ່າຄວາມອະທັມນັ້ນຈະເກີດມາຈາກບຸກຄົນໃດກຸ່ມ ໃດຫຣືພັກໃດກໍ່ຕາມຄົນ ລາວທັງເປີດນັ້ນໃຫ້ພາກັນມືນຕາຕື່ນຂື້ນໃຫ້ເຫັນສະພາບຕົວຈິງ ຂອງປະເທສຂອງຕົນແລະຂອງໂລກແນ່ເກີດ (ຈາກຂບວນການລາວອິສຣະ)